MASSACHUSETTS DEPARTMENT OF
**UNEMPLOYMENT ASSISTANCE**

# ຂໍ້ມູນກ່ຽວກັບການຄຸ້ມຄອງປະກັນໄພຫວ່າງງານຂອງພະນັກງານ

ຊື່ນາຍຈ້າງ

ເລກປະຈຳຕົວຂອງນາຍຈ້າງທີ່ພະແໜກ DUA #

ທີ່ຢູ່

ພະນັກງານຂອງທຸລະກິດ ຫຼືອົງການຈັດຕັ້ງນີ້ ແມ່ນຖືກຄຸ້ມຄອງໂດຍປະກັນໄພຫວ່າງງານ (UI), ຊຶ່ງເປັນໂຄງການທີ່ໄດ້ທຶນທັງໝົດຈາກບັນດານາຍຈ້າງ ໃນລັດ Massachusetts. ບໍ່ມີການຫັກຈາກເງິນເດືອນຂອງທ່ານເພື່ອຈ່າຍຄ່າໃຊ້ຈ່າຍເງິນຜົນປະໂຫຍດປະກັນໄພຫວ່າງງານຂອງທ່ານ.

ຖ້າຫາກທ່ານໄດ້ເສຍວຽກເຮັດງານທຳຂອງທ່ານ, ທ່ານອາດຈະມີສິດທີ່ຈະໄດ້ຮັບເງິນປະກັນໄພຫວ່າງງານ. ຂັ້ນຕອນລຸ່ມນີ້ແມ່ນຂໍ້ມູນທີ່ທ່ານຕ້ອງການເພື່ອຈະຍື່ນຄຳຮ້ອງຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ. ກ່ອນທີ່ຈະຍື່ນ, ນາຍຈ້າງຂອງທ່ານຈະເອົາສຳເນົາປຶ້ມແນະນຳໃຫ້ທ່ານ: ວິທີການຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ, ສະໜອງໃຫ້ໂດຍລັດ Massachusetts, ພະແນກຊ່ວຍເຫຼືອການຫວ່າງງານ (DUA).

**ທ່ານຕ້ອງຢູ່ໃນສະຫະລັດ, ເຂດດິນແດນຂອງສະຫະລັດ ຫຼື ການາດາ ໃນເວລາຍື່ນການຮ້ອງຂໍເງິນ ຫຼືຢັ້ງຢືນສຳລັບເງິນຊ່ວຍເຫຼືອ UI ປະຈຳອາທິດ**

## ມີຢູ່ສອງວິທີການເພື່ອຂໍເອົາເງິນຜົນປະໂຫຍດ UI:

### ສະໝັກໂດຍໃຊ້ UI ທາງອອນໄລນ໌



UI Online (ທາງອອນໄລນ໌) ແມ່ນລະບົບທີ່ປອດໄພ, ຮັບປະກັນ, ສະດວກໃນການນຳໃຊ້, ແລະ ບໍລິການໂດຍຕົນເອງ. ທ່ານສາມາດຂໍ ເອົາເງິນຜົນປະໂຫຍດ, ດຳເນີນການຮ້ອງຂໍທີ່ມີຢູ່ແລ້ວຄືນອີກ, ຮ້ອງຂໍໃຫ້ມີການຈ່າຍເງິນຜົນປະໂຫຍດປະຈຳອາທິດ, ກວດເບິ່ງສະຖານະພາບຄຳຮ້ອງຂໍຂອງທ່ານ, ລົງທະບຽນສຳລັບການໂອນເງິນຝາກໂດຍກົງ, ອັບເດດທີ່ຢູ່ຂອງທ່ານ ແລະ ຍັງຍື່ນຂໍອຸທອນ ທາງອອນໄລນ໌ໄດ້ອີກ. ເພື່ອຈະສະໝັກຂໍເອົາຜົນປະໂຫຍດໂດຍການໃຊ້ UI Online (ທາງອອນໄລນ໌), ໃຫ້ເຂົ້າຫາເວັບໄຊທ໌ **mass.gov/dua**, ເລືອກເອົາ *UI Online for Claimants* ແລະປະກອບຂໍ້ມູນທີ່ຈຳເປັນເພື່ອຍື່ນ ຄຳຮ້ອງຂອງທ່ານ.

### ຂໍເງິນໂດຍໂທຫາສູນ TeleClaim



ການບໍລິການປະກັນໄພການຫວ່າງງານກໍມີໃຫ້ໂດຍທາງໂທລະສັບ. ທ່ານສາມາດຂໍເອົາເງິນຜົນປະໂຫຍດປະກັນໄພຫວ່າງງານ, ດຳເນີນການຂໍເອົາເງິນທີ່ມີຢູ່ໃນປະຈຸບັນຄືນອີກ, ໄດ້ຮັບຂໍ້ມູນທັນເວລາກ່ຽວກັບສະຖານະພາບຂອງຄຳຮ້ອງ ແລະການຈ່າຍຜົນປະໂຫຍດຂອງທ່ານ, ການແກ້ໄຂບັນຫາ, ແລະ ຈົດຊື່ເຂົ້າໃຊ້ເວັບໄຊທ໌ເພື່ອຂໍໃຫ້ໂອນເງິນໂດຍກົງ - ທັງໝົດນີ້ ໂດຍທາງໂທລະສັບ. ເພື່ອຈະຍື່ນຄຳຮ້ອງຂໍເອົາເງິນຜົນປະໂຫຍດໂດຍທາງໂທລະສັບ, ໃຫ້ໂທຫາສູນ TeleClaim ທີ່ເບີ **1 (877) 626-6800**. ຈາກນັ້ນ ທ່ານຈະໄດ້ຖືກເຊື່ອມຕໍ່ໄປຫາຕົວແທນທີ່ຈະເອົາຂໍ້ມູນຈຳເປັນເພື່ອຈະຍື່ນຄຳຮ້ອງຂອງທ່ານ.

This document contains important information. Please have it translated immediately.

В данном документе содержится важная информация. Вам необходимо срочно сделать перевод документа.

Este documento contiene información importante. Por favor, consiga una traducción inmediatamente.

تحتوي هذه الوثيقة على معلومات هامة.
يرجى ترجمتها فورًا.

Docikman sa gen enfòmasyon enpòtan. Tanpri fè yon moun tradwi l touswit.

Questo documento contiene informazioni importanti. La preghiamo di tradurlo inmediatamente.

Este documento contém informações importantes. Por favor, traduzi-lo imediatamente.

此文件含有重要信息。
請立即找人翻譯。

본 문서에는 중요한 정보가 포함되어 있습니다. 본 문서를 즉시 번역하도록 하십시오.

Tài liệu này có chứa thông tin quan trọng. Vui lòng dịch tài liệu này ngay.

ເອກະສານສະບັບນີ້ ບັນຈຸຂໍ້ມູນອັນສຳຄັນ. ກະລຸນາເອົາເອກະສານສະບັບນີ້ໄປແປອອກຢ່າງບໍ່ລໍຊ້າ.

ឯកសារនេះមានទូវព័ត៌មានដ៏សំខាន់ ។
សូមបកប្រែវាជាបន្ទាន់ ។

Ce document contient des informations importantes. Veuillez le faire traduire au plus tôt.

ສຳຄັນ: ກົດໝາຍລັດ Massachusetts ທົ່ວໄປ, ບົດທີ 151A, ພາກທີ 62A ກຳນົດວ່າ ໃຫ້ເອົາໃບແຈ້ງການນີ້ ສະແດງຢູ່ເວັບໄຊທ໌ທີ່ດຳເນີນການໂດຍນາຍຈ້າງໃນສະຖານທີ່ເບິ່ງເຫັນຢ່າງຊັດເຈນ, ບ່ອນທີ່ມັນສາມາດເຂົ້າເຖິງໄດ້ໂດຍພະນັກງານທັງໝົດ. ມັນຕ້ອງລວມມີຊື່ ແລະທີ່ຢູ່ທາງໄປສະນີຂອງນາຍຈ້າງ ແລະເລກກຳນົດການມອບໝາຍກັບນາຍຈ້າງໂດຍພະແນກການຊ່ວຍເຫຼືອ ການຫວ່າງງານ. ໂຄງການທີ່ຜູ້ຈ້າງງານໃຫ້ໂອກາດເທົ່າທຽມກັນ. ລີຍານຸເຄາະຊ່ວຍ ແລະການບໍລິການແມ່ນມີໃຫ້ຕາມຄຳຮ້ອງຂໍໃຫ້ບຸກຄົນທີ່ພິການ. ສຳລັບການບໍລິການພິການທາງດ້ານຫູ, ໃຫ້ໂທຫາ 711. ການຊ່ວຍເຫລືອແລະການບໍລິການທີ່ມານຳນີ້ແມ່ນມີໃຫ້ຕາມຄຳຮ້ອງຂໍໃຫ້ບຸກຄົນທີ່ພິການ. ສຳລັບການບໍລິການພິການທາງດ້ານຫູພິການ, ໃຫ້ໂທຫາ 711.